# ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ແລະ ເຫດການລຳອຽງ

**ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງແມ່ນຫຍັງ?**
ໃນລັດວໍຊິງຕັນ, ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງ ແມ່ນການທຳຮ້າຍທີ່ຕ່ຳຊ້າ ແລະ ໂດຍເຈດຕະນາ, ການທຳລາຍຊັບສິນ ຫຼື ການຂົ່ມຂູ່ທີ່ຈະທຳຮ້າຍ ຫຼື ທຳລາຍຊັບສິນ ຕໍ່ກັບອີກຄົນໜຶ່ງ ຍ້ອນເຫັນວ່າຄົນນັ້ນມີເຊື້ອຊາດ, ສີຜິວ, ສາສະໜາ, ບັນພະບຸລຸດ, ຊາດກຳເນີດ, ເພດ, ວິດສະນິຍົມທາງເພດ, ການສະແດງອອກທາງເພດ ຫຼື ອັດຕະລັກທາງເພດ, ຫຼື ຄວາມພິການທາງດ້ານສະໝອງ, ຮ່າງກາຍ ຫຼື ປະສາດສຳຜັດ.

ອາດຊະຍາກຳທີ່ເກີດຈາກຄວາມກຽດຊັງແມ່ນການກະທຳຜິດທີ່ຮ້າຍແຮງໃນລັດວໍຊິງຕັນ, ມີການລົງໂທດສູງສຸດໃຫ້ ຈຳຄຸກ ຫ້າ ປີ ແລະ/ຫຼື ປັບໃໝ $100,000. ເຫຍື່ອຂອງອາດຊະຍາກຳທີ່ເກີດຈາຄວາມກຽດຊັງ ຍັງອາດຈະຍື່ນຟ້ອງຄະດີທາງແພ່ງເພື່ອໃຫ້ຜູ້ກະທຳຜິດຊົດໃຊ້ຄວາມເສຍຫາຍຕົວຈິງ, ຄວາມເສຍຫາຍດ້ານການລົງໂທດເພື່ອເປັນແບບຢ່າງ ສູງເຖິງ $100,000, ແລະ ຄ່າແຮງງານທີ່ສົມເຫດສົມຜົນຂອງທະນາຍຄວາມ ແລະ ຄ່າໃຊ້ຈ່າຍຕ່າງໆທີ່ເກີດຂຶ້ນໃນການຍື່ນຟ້ອງສານ (Revised Code of Washington, (RCW, ກົດໝາຍລັດວໍຊິງຕັນສະບັບປັບປຸງ) 9A.36.080),

**ເຫດການລຳອຽງແມ່ນຫຍັງ?**
ໃນລັດວໍຊິງຕັນ, ເຫດການລຳອຽງ ແມ່ນ ການສະແດງອອກເຖິງຄວາມອາຄາດທີ່ມີຕໍ່ຄົນອື່ນ **ບົນພື້ນຖານທີ່ຄົນອື່ນນັ້ນມີແທ້ ຫຼື ເຫັນວ່າມີ ເຊື້ອຊາດ, ສີຜິວ, ຫຼັກຄວາມເຊື່ອ, ສາສະໜາ, ບັນພະບຸລຸດ, ຊາດກຳເນີດ, ສັນຊາດ ຫຼື ສະຖານະພາບການເຂົ້າເມືອງ, ເພດ, ທະຫານຜ່ານເສິກທີ່ປົດປະຈຳການຢ່າງມີກຽດ ຫຼື ສະຖານະພາບທາງທະຫານ, ວິດສະນິຍົມທາງເພດ, ຫຼື ການປະກົດມີຄວາມພິການທາງດ້ານປະສາດສຳຜັດ, ສະໝອງ ຫຼື ຮ່າງກາຍ ຫຼື ການນຳໃຊ້ໝານຳທາງທີ່ຜ່ານການຝຶກ ຫຼື ສັດທີ່ຊ່ວຍເຫຼືອຄົນທີ່ມີຄວາມພິການ** (RCW 43.10.305(5)(a)).
ລາຍການກ່ຽວກັບລັກສະນະບຸກຄົນຕ່າງໆແມ່ນໄດ້ລວມໄວ້ໃນລັກສະນະບຸກຄົນທີ່ກຳນົດໃນກົດໝາຍວ່າດ້ວຍອ າດຊະຍາກຳທີ່ເກີດຈາກຄວາມກຽດຊັງຂອງລັດວໍຊິງຕັນ ແລະ ຊົນຊັ້ນທີ່ໄດ້ຮັບການປົກປ້ອງ ພາຍໃຕ້ Washington Law Against Discrimination (ກົດໝາຍວ່າດ້ວຍການຕໍ່ຕ້ານການຈຳແນກຂອງລັດວໍຊິງຕັນ) (RCW 49.60.030(1)).

"ການສະແດງອອກເຖິງຄວາມອາຄາດ" ໝາຍເຖິງການສະແດງຄວາມຄິດກ່ຽວກັບຄວາມກຽດຊັງ ຫຼື ຄວາມລຳອຽງທີ່ມີລັກສະນະຍາບຄາຍ, ບໍ່ເປັນມິດ ຫຼື ຮຸກຮານ.
**ເຫດການລຳອຽງແມ່ນເຫດການທີ່ບໍ່ທັນໄດ້ຍົກລະດັບຂຶ້ນເປັນອາດຊະຍາກຳ ຫຼື ການປະພຶດຜິດທາງອາຍາ.** ຕົວຢ່າງຂອງເຫດການລຳອຽງ ລວມມີ, ແຕ່ບໍ່ຈຳກັດແຕ່ພຽງເທົ່ານີ້:

- ນຳໃຊ້ພາສາປ້ອຍດ່າໃຫ້ແກ່ຄົນອື່ນບົນພື້ນຖານລັກສະນະບຸກຄົນທີ່ຕົນເອງເຫັນ ຫຼື ຊົນຊັ້ນທີ່ໄດ້ຮັບການປົກປ້ອງ.
- ສ້າງການຈຳແນກເຊື້ອຊາດ ຫຼື ປ້ອຍດ່າພາບລັກຕ່າງໆ ຫຼື ແຕ້ມບົນພື້ນຖານລັກສະນະຂອງບຸກຄົນອື່ນທີ່ຕົນເຫັນ ຫຼື ຊົນຊັ້ນທີ່ໄດ້ຮັບການປົກປ້ອງ.

- ເຍາະເຍີ້ຍຄົນທີ່ມີຄວາມພິການ ຫຼື ບັນທັດຖານ ຫຼື ການປະຕິບັດດ້ານວັດທະນະທຳຂອງຄົນອື່ນ.

**ສາຍດ່ວນດ້ານອາດຊະຍະກຳທີ່ເກີດຈາກຄວາມກຽດຊັງ ແລະ ເຫດການລຳອຽງ**

Attorney General’s Office (AGO, ສຳນັກງານໄອຍະການສູງສຸດ) ຂອງລັດວໍຊິງຕັນໄດ້ຮັບການຊີ້ນຳໃຫ້ສ້າງຕັ້ງ Hate Crimes & Bias Incidents Hotline (ສາຍດ່ວນດ້ານອາດຊະຍະກຳທີ່ເກີດຈາກຄວາມກຽດຊັງ ແລະ ເຫດການຄວາມລຳອຽງ) ພາຍໃຕ້ [Senate Bill (SB, ຮ່າງບົດບັນຍັດວຸດທິສະພາ) 5427 (2024)], ຜ່ານໂດຍລັດຖະສະພາ ໃນປີ 2024 ແລະ ກຳນົດລະຫັດແມ່ນ [RCW 43.10.305]. ສາຍດ່ວນຕ້ອງສະໜອງຂໍ້ມູນແກ່ຜູ້ໂທ ແລະ ສະເໜີການນຳສົ່ງເຖິງການບໍລິການຕ່າງໆ ທີ່ຄຳນຶງເຖິງ ທ້ອງຖິ່ນ, ຖືເອົາຜູ້ຕົກເປັນເຫຍື່ອເປັນສູນກາງ, ຄຳນຶງເຖິງຄວາມສາມາດທາງວັດທະນະທຳ ແລະ ປິ່ນປົວບາດແຜທາງດ້ານຈິດໃຈ, ແລະ ຖ້າເປັນໄປໄດ້ໃຫ້ມີການເຂົ້າເຖິງໃນຫຼາຍໆພາສາ. ສາຍດ່ວນຈະມີບໍລິການໃຫ້ໃນ ຂົງເຂດ Clark, King ແລະ Spokane ຕັ້ງແຕ່ວັນທີ 1 ກໍລະກົດ 2025 ເປັນຕົ້ນໄປ ແລະ ມີບໍລິການໃຫ້ທົ່ວທັງລັດແຕ່ວັນທີ 1 ມັງກອນ 2027 ເປັນຕົ້ນໄປ. **ສາຍດ່ວນນີ້ບໍ່ແມ່ນສາຍດ່ວນສຸກເສີນ, ແລະ ຜູ້ໂທຈະຖືກແນະນຳໃຫ້ໂທຫາ 911 ຖ້າວ່າພວກເຂົາກຳລັງໂທຫາເພື່ອລາຍງານເຫດການສຸກເສີນ.**

**ໃຜທີ່ເປັນເຫຍື່ອຂອງຄວາມກຽດຊັງ ຫຼື ຄວາມລຳອຽງ ອາດໂທຫາສາຍດ່ວນ ເພື່ອລາຍງານເຫດການ ແລະ ຮັບຂໍ້ມູນກ່ຽວກັບການບໍລິການ, ໂດຍບໍ່ກ່ຽວກັບສະຖານະພາບຂອງການເຂົ້າເມືອງ. ໂດຍຈະມີການບໍລິການແປພາສາໃຫ້.** ຜູ້ສະໜອງບໍລິການທີ່ສາຍດ່ວນສະເໜີໃຫ້ແກ່ຜູ້ໂທ ຈະສະໜອງການບໍລິການທີ່ຫຼາກຫຼາຍ ລວມມີບໍລິການສຸຂະພາບທາງຮ່າງກາຍ ແລະ ຈິດໃຈ; ການຊ່ວຍເຫຼືອທາງດ້ານກົດໝາຍ, ການສະໜັບສະໜູນທີ່ຕິດພັນກັບວັດທະນະທຳ; ແລະ ການສະໜັບສະໜູນຊ່ວຍເຫຼືອຜູ້ຕົກເປັນເຫຍື່ອ.

**ຂໍ້ມູນການລະບຸຕົວຕົນທີ່ໄດ້ລາຍງານຜ່ານສາຍດ່ວນຈະໄດ້ຮັບການປົກປ້ອງ ແລະ ຈະບໍ່ເປີດເຜີຍແກ່ສາທາລະນະ.** ຂໍ້ມູນນີ້ລວມມີ ຊື່, ຊື່ເດີມທີ່ເຄີຍໃຊ້, ນາມແຝງ, ຊື່ແມ່ທີ່ເປັນເດັກຍິງ, ວັນທີ ຫຼື ສະຖານທີ່ເກີດ, ຖິ່ນທີ່ຢູ່, ທີ່ຢູ່ທີ່ສົ່ງທາງໄປສະນີ, ໝາຍເລກໂທລະສັບ, ທີ່ຢູ່ອີເມວ, ໝາຍເລກປະກັນສັງຄົມ, ໝາຍເລກໃບຂັບຂີ່, ໝາຍເລກບັນຊີທະນາຄານ ແລະ ຂໍ້ມູນອື່ນໆທີ່ລະບຸຕົວຕົນ ([RCW 43.10.305(5)(g)]).

ໂດຍຂໍ້ກຳນົດທາງກົດໝາຍ, ສາຍດ່ວນຕ້ອງຖາມວ່າ ຜູ້ໂທໄດ້ລາຍງານເຖິງໜ່ວຍງານບັງຄັບໃຊ້ກົດໝາຍແລ້ວຫຼືບໍ່ ແລະ ຖ້າວ່າພວກເຂົາເຈົ້າຕ້ອງການເຊັ່ນນັ້ນ. **ສາຍດ່ວນຈະສົ່ງຕໍ່ເຖິງໜ່ວຍງານບັງຄັບໃຊ້ກົດໝາຍສະເພາະແຕ່ກໍລະນີທີ່ຜູ້ໂທຍິນຍອມເທົ່ານັ້ນ** ແລະ ຈະພຽງແຕ່ແບ່ງປັນຂໍ້ມູນການລະບຸຕົວຕົນ ເຊິ່ງເປັນຂໍ້ມູນທີ່ຜູ້ໂທຕ້ອງການໃຫ້ແບ່ງປັນເທົ່ານັ້ນ. **ໜ່ວຍງານບັງຄັບໃຊ້ກົດໝາຍຈະຖືກຮຽກຮ້ອງໃຫ້ແບ່ງປັນຂໍ້ມູນຕິດຕໍ່ຂອງສາຍດ່ວນ**ກັບຜູ້ທີ່ດຳເນີນການລາຍງານກ່ຽວກັບເຫດການທີ່ເກີດຈາກຄວາມກຽດຊັງ ຫຼື ຄວາມລຳອຽງໃຫ້ແກ່ເຂົາເຈົ້າ.

ຮ່າງ